ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 17 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 19

# ມະຕິ

## ກອງປະຊຸມສະພາແຫ່ງຊາດວ່າດ້ວຍ ການພັດທະນາຊັບພະຍາກອນມະນຸດ ຕາມຂະແໜງການບູລິມະສິດ ໃນສາຂາວິຊາ ກະສິກຳ, ຄູ ແລະ ພະຍາບານ.

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປີ 2015 ມາດຕາ 59 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີຄັ້ງທີໜຶ່ງ ຂອງສະພາແຫ່ງຊາດ;
- ອີງຕາມ ບົດລາຍງານຂອງລັດຖະບານ ຊຶ່ງສະເໜີໂດຍ ທ່ານລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດ ເພື່ອພັດທະນາຊັບພະຍາກອນມະນຸດ, ສະບັບເລກທີ 2705/ສສກ, ລົງວັນທີ 5 ມິຖຸນາ 2019 ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII.

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ການປະກອບຄຳເຫັນ ຂອງຄະນະປະຈຳສະພາແຫ່ງຊາດ ແລະ ການຄົ້ນຄວ້າປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ການຊີ້ແຈງຂອງຜູ້ຕາງໜ້າລັດຖະບານ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII, ຄັ້ງວັນທີ 5 ມິຖຸນາ 2019.

ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະ ການພັດທະນາຊັບພະຍາກອນມະນຸດ ໃຫ້ໄປຕາມຂະແໜງການບູລິມະສິດ ເປັນຕົ້ນ ວິຊາສະເພາະດ້ານໃນສາຂາວິຊາ ກະສິກຳ, ຄູ, ພະຍາບານ ເພື່ອສາມາດຕອບສະໜອງໃຫ້ແກ່ການພັດທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກ.

ກອງປະຊຸມ ສະແດງຄວາມຊົມເຊີຍຕໍ່ລັດຖະບານ ທີ່ໄດ້ເອົາໃຈໃສ່ປະຕິບັດແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໂດຍເລັ່ງໃສ່ຍົກລະດັບບຸກຄະລາກອນທັງພາກລັດ ແລະ ເອກະຊົນ ໃຫ້

ສູງຂຶ້ນ ເພື່ອສ້າງຄົນໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຄວາມຮູ້ຄວາມສາມາດ, ສຸຂະພາບແຂງແຮງ, ຄວາມຊໍານານງານ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ, ຫັນປ່ຽນ ໂຄງປະກອບກໍາລັງແຮງງານ ໄປຕາມທິດການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ, ເສດຖະກິດ-ສັງຄົມ ໄດ້ຮັບການຂະຫຍາຍຕົວຕໍ່ເນື່ອງ.

ຄຽງຄູ່ກັນນັ້ນ, ກອງປະຊຸມ ຍັງເຫັນໄດ້ບາງຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ຊຶ່ງຈະຕ້ອງສືບຕໍ່ແກ້ໄຂ ເປັນຕົ້ນ ການຄຸ້ມຄອງ ແລະ ການນໍາໃຊ້ຊັບພະຍາກອນມະນຸດ, ການປະເມີນຄວາມຕ້ອງການ ແລະ ການສະໜອງພະນັກງານວິຊາສະເພາະໃນຕໍາແໜ່ງງານຕ່າງໆ, ການກໍ່ສ້າງບຸກຄະລາກອນ ບໍ່ສອດຄ່ອງກັບຍຸດທະສາດການພັດທະນາ ແລະ ໂຄງປະກອບເສດຖະກິດ, ການປະສານສົມທົບລະຫວ່າງ ສະຖານການສຶກສາ ແລະ ຜູ້ປະກອບການ ໃນການສ້າງວິຊາການສະເພາະດ້ານ ເຊັ່ນ ການປູກຝັງ, ລ້ຽງສັດ, ຊົນລະປະທານ ແລະ ສັດຕະວະແພດ, ປະກົດການຄູເຫຼືອບໍ່ພໍ, ການກໍ່ສ້າງພະຍາບານລະດັບຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 2** ຮັບຮອງເອົາທິດທາງລວມກ່ຽວກັບ ການພັດທະນາຊັບພະຍາກອນມະນຸດ ແລະ ມາດຕະການຈັດຕັ້ງປະຕິບັດຂອງ 3 ຂະແໜງບູລິມະສິດ

ກອງປະຊຸມ ຮັບຮອງເອົາທິດທາງລວມໃນຕໍ່ໜ້າ ໃນການພັດທະນາຊັບພະຍາກອນມະນຸດ ຊຶ່ງປະກອບມີ 11 ວຽກຈຸດສຸມ, 6 ມາດຕະການແກ້ໄຂໃນຂະແໜງກະສິກໍາ, 17 ມາດຕະການແກ້ໄຂບັນຫາ ຄູເຫຼືອບໍ່ພໍ, ການບັນຈຸລັດຖະກອນຄູ, ຄູອາສາສະໝັກ ແລະ 9 ມາດຕະການແກ້ໄຂໃນຂະແໜງພະຍາບານ. ເພື່ອຮັບປະກັນການພັດທະນາຊັບພະຍາກອນມະນຸດ ໃຫ້ສາມາດຕອບສະໜອງຄວາມຕ້ອງການ ໃນການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ຕາມຂະແໜງບູລິມະສິດ ໃຫ້ຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດ ແລະ ກອງປະຊຸມສະເໜີ ໃຫ້ລັດຖະບານເອົາໃຈໃສ່ມາດຕະການເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີການຊີ້ນໍາ-ນໍາພາ ຂອງຄະນະພັກ, ຄະນະນໍາທຸກຂັ້ນ ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃຫ້ເປັນວຽກບູລິມະສິດຂອງຕົນ, ສ້າງແຜນພັດທະນາຊັບພະຍາກອນມະນຸດ ໃນຂອບເຂດຄວາມຮັບຜິດຊອບຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ພ້ອມທັງມີການເຜີຍແຜ່ໃຫ້ອົງການຈັດຕັ້ງລັດ ພະນັກງານ-ລັດຖະກອນ ແລະ ສັງຄົມ ຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງ;

2. ຄົ້ນຄວ້າ, ສ້າງ ແລະ ປັບປຸງບັນດານິຕິກໍາ ທີ່ກ່ຽວຂ້ອງກັບການພັດທະນາຊັບພະຍາກອນມະນຸດ ໃຫ້ເປັນລະບົບ ໂດຍສະເພາະ ການສ້າງຄູ່ມືແນະນໍາ ການຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

3. ປັບປຸງກົນໄກການປະສານສົມທົບ ລະຫວ່າງ ຄະນະກໍາມາທິການແຫ່ງຊາດ, ຄະນະກໍາມະການລະດັບກະຊວງ, ແຂວງ, ນະຄອນ ເພື່ອພັດທະນາຊັບພະຍາກອນມະນຸດ ໃຫ້ຈະແຈ້ງ, ສ້າງລະບົບຕິດຕາມປະເມີນຜົນ ແລະ ມີການລາຍງານເປັນປົກກະຕິ;

4. ຊີ້ນໍາກະຊວງສຶກສາທິການ ແລະ ກິລາ ໃຫ້ເພີ່ມທະວີການຄຸ້ມຄອງ ແຫຼ່ງຊັບພະຍາກອນມະນຸດ ທຸກລະດັບ, ທຸກຂະແໜງການ ທີ່ໄດ້ສໍາເລັດການສຶກສາໃນສາຂາວິຊາສະເພາະຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບ ເພື່ອມີແຜນນໍາໃຊ້ ບົນພື້ນຖານການປະສານສົມທົບກັບ ກະຊວງ, ອົງການ ແລະ ຜູ້ປະກອບການ ເພື່ອຕອບສະໜອງຄວາມຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

5. ພັດທະນາລະບົບຂໍ້ມູນ-ຂ່າວສານການພັດທະນາຊັບພະຍາກອນມະນຸດ ໃຫ້ເປັນລະບົບ ແລະ ທັນສະໄໝ ແນໃສ່ພັດທະນາ ແລະ ຄຸ້ມຄອງບຸກຄະລາກອນ ໃຫ້ລວມສູນ, ເປັນເອກະພາບທົ່ວປະເທດ;

6. ຊີ້ນຳກະຊວງສຶກສາທິການ ແລະ ກິລາ ປະເມີນຄວາມສອດຄ່ອງ, ປັບປຸງມາດຕະຖານຫຼັກສູດ ແລະ ເນື້ອໃນຫຼັກສູດ ໃຫ້ໄປຕາມຫຼັກສູດແຫ່ງຊາດ ແລະ ຫຼັກສູດທ້ອງຖິ່ນ ເພື່ອຮັບປະກັນຄຸນນະພາບການກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ;

7. ເພີ່ມທະວີການປຸກລະດົມ, ໂຄສະນາ, ເຜີຍແຜ່ ພ້ອມທັງປູກຈິດສຳນຶກ, ສ້າງຄວາມເຂົ້າໃຈ ແລະ ແນະນຳສາຂາວິຊາຊີບ ທີ່ມີຄວາມຈຳເປັນໃນການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໃຫ້ແກ່ນັກຮຽນສາຍສາມັນ ທັງພາກລັດ ແລະ ເອກະຊົນ ໄດ້ເລືອກຮຽນຢ່າງມີຈຸດສຸມ ເພື່ອສົ່ງເສີມການສ້າງວຽກເຮັດງານທຳດ້ວຍຕົນເອງ ແລະ ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ;

8. ຂຶ້ນແຜນງົບປະມານ ເພື່ອຊຸກຍູ້ການເຄື່ອນໄຫວວຽກງານຂອງ ຄະນະກຳມາທິການແຫ່ງຊາດ ເພື່ອພັດທະນາຊັບພະຍາກອນມະນຸດ ແລະ ການຈັດຕັ້ງປະຕິບັດວຽກງານຈຸດສຸມ ແລະ ບູລິມະສິດໃນການກໍ່ສ້າງບຸກຄະລາກອນ ແລະ ການປະກອບສິ່ງອຳນວຍຄວາມສະດວກໃນດ້ານຕ່າງໆ ເປັນຕົ້ນ ການປະກອບເຄື່ອງທົດລອງເພື່ອຮັບໃຊ້ການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ, ການສ້າງຫໍພັກນັກສຶກສາ ໃຫ້ຜູ້ດ້ອຍໂອກາດທີ່ມາຮຽນ ກະສິກຳ, ຄູ, ພະຍາບານ ແລະ ປະຊາຊົນ ທີ່ມາຝຶກອົບຮົມ ຢູ່ສະຖານການສຶກສາທີ່ເປັນຕົວແບບດ້ານຕ່າງໆ; ພ້ອມທັງຊຸກຍູ້ພາກເອກະຊົນ ໃຫ້ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ໃຫ້ຫຼາຍຂຶ້ນ.

## ມາດຕາ 3 ການຈັດຕັ້ງປະຕິບັດ

ມອບໃຫ້ລັດຖະບານ ຊີ້ນຳຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ, ກະຊວງສຶກສາທິການ ແລະ ກິລາ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ຄະນະປະຈຳສະພາແຫ່ງຊາດ ຊີ້ນຳບັນດາກຳມາທິການ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງເຂັ້ມງວດ.

## ມາດຕາ 4 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້